# ວິທີທີ່ຈະຮູ້ອານາຄົດ

## ຄວາມຝັນຈາກອາດີດບອກສິ່ງທີ່ເກີດຂຶ້ນໃນປະຈຸບັນ

ນັກວິໄຈຄົ້ນຄວ້າເວົ້າວ່າພວກເຮົາທຸກຄົນຝັນ ແລະກໍຝັນຫລາຍເທື່ອໃນແຕ່ລະຄືນ. ຝັນນັ້ນກໍມີທັງຝັນຮ້າຍຝັນດີ. ບາງຄົນສວດຕື່ນຕອນທີ່ກໍາລັງຝັນຫວານໆມ່ວນໆ ກັບໄປນອນແລະຢາກຈະຝັນຕໍ່ໃຫ້ມັນຈົບ ແຕ່ກໍບໍ່ຝັນຕໍ່ ແລະເຂົາກໍເລີຍຜິດຫວັງຫລືໃຈຮ້າຍ. ແລະກໍມີບາງເທື່ອທີ່ວ່າເຮົາກໍາລັງຝັນຮ້າຍ ເຮັດໃຫ້ເຮົາຮູ້ສຶກອຶດອັດຫາຍໃຈຍາກ ແລະພໍເມື່ອເຮົາສວດຕື່ນຈາກຝັນຮ້າຍນັ້ນແລະຄິດອອກໄດ້ວ່າມັນເປັນພຽງຄວາມຝັນ ເຮົາກໍຈະຮູ້ສຶກຜ່ອນຄາຍຫາຍໃຈໂລ່ງ. ບໍ່ວ່າຈະຝັນແນວໃດກໍແລ້ວແຕ່ ສ່ວນໃຫຍ່ເຮົາຈື່ຄວາມຝັນຂອງເຮົາບໍ່ໄດ້.

ອັບຣາຮາມ ລິງຄອນເປັນປະທານນາທິບໍດີຄົນທີ 16 ຂອງສະຫະລັດອາເມລິກາ ຖ້າເຮົາເບິ່ງໃນໃບ 5 ດໍລ້າຂອງເງິນອາເມລິກາເຮົາກໍຈະເຫັນຮູບຂອງປະທານນາທິບໍດີຄົນນີ້.

ຄືນໜຶ່ງປະທານນາທິບໍດີ ອັບຣາຮາມ ລິງກອນ ໄດ້ຝັນໃນສິ່ງທີ່ລາວບໍ່ຢາກຈະຝັນ ລາວໄດ້ເລົ່າຄວາມຝັນໃຫ້ ວາຣ໌ດ ຫິວລ໌ ເລມອນ ເຊິ່ງເປັນໝູ່ສະໜິດຂອງລາວຟັງ ແລະລາວກໍໄດ້ຂຽນຄໍາບອກເລົ່າຄວາມຝັນຂອງປະທານນາທິບໍດີ ອັບຣາຮາມ ລິງຄອນ. ປະທານນາທິບໍດີ ລິງຄອນໄດ້ເລົ່າວ່າ "ປະມານ 10 ມື້ທີ່ແລ້ວ ຂ້ອຍເຂົ້ານອນເດິກຫລາຍ...ຂ້ອຍໄດ້ຝັນວ່າ. ເບິ່ງຄືວ່າ ໄດ້ມີສຽງງຽບໆແຫ່ງຄວາມຕາຍຢູ່ອ້ອມໆຂ້ອຍ. ຂ້ອຍໄດ້ຍິນສຽງໃຫ້ຄວນຄາງ ເບິ່ງຄືວ່າມີຄົນເປັນຈໍານວນຫລາຍກໍາລັງຮ້ອງໃຫ້"
ຂ້ອຍອອກຈາກຕຽງຍ່າງລົງຂັ້ນໃດໄປແລ້ວຂ້ອຍໄດ້ຍິນສຽງໃຫ້ຄວນຄາງຂອງຄົນອັນເປັນທີ່ໜ້າສົງສານແຕ່ວ່າຂ້ອຍເບິ່ງບໍ່ເຫັນຄົນເຫລົ່ານັ້ນ. ຂ້ອຍຍ່າງໄປເບິ່ງຫລາຍໆຫ້ອງ ຂ້ອຍເບິ່ງບໍ່ເຫັນໃຜຈັກຄົນເລີຍຢູ່ໃນຫ້ອງ ແຕ່ສຽງໃຫ້ຄວນຄາງດ້ວຍຄວາມທຸກທໍລະມານກໍຍັງກຶກກ້ອງໃນຫູຂ້ອຍໃນທຸກທີ່ທີ່ຂ້ອຍໄປ... ຂ້ອຍງົງແລະຕົກໃຈກົວຫລາຍ... ຂ້ອຍຍ່າງຕໍ່ໄປຈົນຂ້ອຍໄປຮອດຫ້ອງທາງຝາກຕາເວັນອອກ ທີ່ຫ້ອງນັ້ນຂ້ອຍໄດ້ພົບສິ່ງທີ່ເຮັດໃຫ້ຂ້ອຍປະຫລາດໃຈຫລາຍ ຂ້ອຍໄດ້ເຫັນເວທີແລະໄດ້ມີໂລງສົບຂອງຄົນໜຶ່ງເຊິ່ງເປັນຄົນສໍາຄັນຢູ່ເທິງເວທີນັ້ນ ແລະໄດ້ມີທະຫານຍາມຢູ່ຮອບໆ ເຂົາໄດ້ເອົາຜ້າປົກໜ້າສົບນັ້ນ ແລະໄດ້ມີຝູງຊົນເປັນຈໍານວນຫລາຍເຝົ້າມອງໄປທີ່ສົບນັ້ນດ້ວຍຄວາມເສຍໃຈ ຂ້ອຍຖາມນາຍທະຫານຄົນໜຶ່ງໃນທີ່ນັ້ນວ່າ 'ແມ່ນໃຜໃນທໍານຽບຂາວທີ່ຕາຍ' ນາຍທະຫານຄົນນັ້ນຕອບວ່າ 'ປະທານນາທິບໍດີ' 'ລາວໄດ້ຖືກຄົນລອບຂ້າ'"

ຫລັງຈາກນັ້ນໄດ້ສອງສາມມື້ ເຊິ່ງເປັນວັນທີ 14 ເດືອນ 4 ປີ 1865 ຜູ້ນໍາທີ່ ແສນເຄົາລົບຮັກ ຄືປະທານນາທິບໍດີ ອັບຣາຮາມ ລິງຄອນ ໄດ້ຖືກ ຈອນ ວິວເກດສ໌ ບູດທ໌ ຮອບຂ້າ.

ສົບຂອງລາວໄດ້ນຳໄປໄວ້ທີ່ຮ້ອງທິດຕາເວັນອອກຂອງທຳນຽບຂາວ. ອັບຣາຮາມ
ລິງຄອນເປັນຜູ້ນຳຄົນສຳຄັນ ແລະລາວກໍໄດ້ມີຄວາມຝັນອັນບໍ່ໜ້າເຊື່ອ

ເຫັນຫລືບໍ່ວ່າ ຄວາມຝັນບາງຄວາມຝັນກໍສາມາດກາຍເປັນຈິງ

ຄວາມຝັນອັນຍິ່ງໃຫຍ່ທີ່ສຸດທີ່ເຄີຍບັນທຶກໄວ້ໃນປະຫວັດສາດ ເຊິ່ງໄດ້ເກີດຂຶ້ນໃນຄືນໜຶ່ງເມື່ອ 2600 ປີທີ່ແລ້ວ ໃນສະໄໝອານາຈັກບາບີໂລນບູຮານຮຸ່ງເຮືອງ ຄວາມຝັນນີ້ໄດ້ຖືກຂຽນບັນທຶກໄວ້ເປັນຢ່າງດີ, ຊາຍຄົນໜຶ່ງທີ່ຝັນນີ້ໄດ້ເລົ່າແລະຂຽນໂດຍກ່ຽວກັບຄວາມຝັນນີ້ໄວ້ ຊາຍຄົນນີ້ເປັນຜູ້ນຳແລະເປັນກະສັດທີ່ຍິ່ງໃຫຍ່

ເຮົາສາມາດອ່ານກ່ຽວກັບຄວາມຝັນນີ້ໄດ້ໃນພະທຳ ດານີເອນ ບົດທີສອງ
ຜູ້ນຳຄົນນີ້ຝັນແຕ່ບໍ່ສາມາດຈື່ຄວາມຝັນຂອງລາວໄດ້ ລາວຮູ້ສຶກວ່າຄວາມຝັນນີ້ຂອງລາວສຳຄັນຫລາຍ
ແລະມັນກໍສຳຄັນແທ້ ພະເຈົ້າໄດ້ປະທານຄວາມຝັນໃຫ້ແກ່ລາວ
ແລະຝັນນີ້ກໍບອກໃຫ້ພວກເຮົາຮູ້ເຖິງມີສິ່ງໄດ້ເກີດຂຶ້ນ ໃນປະຫວັດສາດໂລກ
ໂດຍສະເພາະກ່ຽວກັບຢູໂຣບແລະຕາເວັນອອກກາງ ນັບຕັ້ງແຕ່ສະໄໝຂອງ
ກະສັດເນບຸກາດເນສຊາຣໄປຈົນເຖິງເວລາສຸດທ້າຍ.
ຂອບຄຸນພະເຈົ້າທີ່ພະອົງບອກເຖິງສິ່ງທີ່ຈະເກີດຂຶ້ນໃນອານາຄົດ.

ບາບີໂລນເປັນອານາຈັກທຳອິດຂອງໂລກແລະກໍເປັນອານາຈັກທີຍິ່ງໃຫຍ່ທີ່ສຸດ, ລ້ຳລວຍທີ່ສຸດ ແລະ ເປັນອານາຈັກທີ່ມີອຳນາດແລະອິດທິພົນທີ່ສຸດ
ທຸກເມືອງແລະອານາຈັກໃນສະໄໝນັ້ນຢູ່ໄຕ້ອຳນາດຂອງບາບີໂລນ
ບາບີໂລນເປັນເມືອງທີ່ຮູ້ຈັກກັນດີໃນທົ່ວໂລກວ່າເປັນເມືອງທີ່ສີວິໄລທີ່ສຸດໃນສະໄໝນັ້ນ.
ກະສັດເມືອງບາງບີໂລນ ກໍເປັນກະສັດທີ່ເຂັ້ມແຂງມີອານາດຫລາຍ.
ຜູ້ນຳຄົນນີ້ໄດ້ໃຊ້ກຳລັງທະຫານຂອງລາວໄປປາບສັດຕູໃນທຸກຕົວເມືອງທຸກຂົງເຂດຈົນເຮັດໃຫ້ອານາຈັກຂອງລາວເປັນອານາຈັກທີ່ປົກຄອງທຸກໆຊົນຊາດໃນໂລກ

ໃນປີທີ່ສອງຂອງການຄອງລາດ ກະສັດເນບຸກາດເນສຊາຣໄດ້ກັງວົນຊຸ້ນຄິດວ່າອານາຈັກຂອງພະອົງຈະຍືນຍົດໄປໄດ້ດົນປານໃດ. ເໝືອນດັ່ງຜູ້ນຳຫລາຍໆຄົນທີ່ຢາກຮູ້ອານາຄົດ ກະສັດເນບຸກາດເນສຊາຣ໌ກໍຢາກຈະຮູ້ວ່າແມ່ນຫຍັງຈະເກີດຂຶ້ນໃນອານາຄົດຄືກັນ.
ຄືນໜຶ່ງພະເຈົ້າໄດ້ທອດພະເນດລົງມາຈາກສະຫວັນເພື່ອທີ່ຈະເລືອກກະສັດອົງນີ້ໃຫ້ໄດ້ເຫັນເຖິງສິ່ງທີ່ຈະເກີດໃນອານາຄົດ. ເມື່ອກະສັດເນບຸກາດເນສຊາຣ໌ຕື່ນຈາກນອນແລ້ວ ພະອົງກໍວິຕົກກັງວົນ
ພະອົງຮູ້ສຶກວ່າພະອົງໄດ້ຝັນ ແລະພະອົງຮູ້ວ່າຄວາມຝັນນີ້ສຳຄັນຫລາຍ
ແຕ່ພະອົງຈຳບໍ່ໄດ້ວ່າພະອົງຝັນຫຍັງ. ຄົນບາບີໂລນຖືວ່າສິ່ງທີ່ເຫັນໃນຝັນເປັນສິ່ງທີ່ສຳຄັນຫລາຍ.

ກະສັດເນບຸກາເນສຊາຣ໌ຢາກຈະຮູ້ວ່າພະ ອົງຝັນຫຍັງແລະກໍຢາກຈະຮູ້ວ່າຝັນນັ້ນມີຄວາມໝາຍອັນໃດ. ພະອົງມີທັງໂຫລາຈານ ໝໍມົນ ໝໍຜີ ເຊິ່ງພວກເຂົາສາມາດຕີຄວາມຝັນຂອງພະອົງໄດ້ ແລະພວກເຂົາກໍຖືກຮ້ອງໃຫ້ໄປພົບພະອົງ ເມື່ອພວກເຂົາເຂົ້າມາຢືນຢູ່ຕໍ່ໜ້າພະອົງ ພະອົງໄດ້ຕັດກັບເຂົາວ່າ

(ດານິເອນ 2:3) "ເຮົາໄດ້ຝັນບໍ່ດີແລະເປັນທຸກໃຈຫລາຍ ເຮົາຢາກຮູ້ວ່າຄວາມຝັນນັ້ນເປັນຢ່າງໃດ"

ໂຫລາຈານ ໝໍມົນ ໝໍຜີເຫລົ່ານີ້ກໍຄ້າຍໆຄືຫລາຍຄົນທີ່ທຳທ່າເຮັດຄືຮູ້ແລະທຳນວາຍອານາຄົດ ພວກເຂົາສາມາດເດົາແບບຕົວະໆວ່າສິ່ງທີ່ເຫັນໃນຝັນມີຄວາມໝາຍວ່າແນວໃດ ແຕ່ພວກເຂົາກໍບໍ່ສາມາດບອກໄດ້ວ່າສິ່ງທີ່ກະສັດຝັນເຫັນນັ້ນແມ່ນຫຍັງ. ພວກເຂົາເສແສ້ງຍືດຍາວເວລາຊື່ ແລະໃນທີ່ສຸດພວກເຂົາກໍເວົ້າອອກມາວ່າ

(ດານິເອນ 2:4) "ຂໍພຣະອົງຊົງພຣະຈະເຣີນເທີນ ຂໍຊົງເລົ່າຄວາມຝັນຂອງພຣະອົງໃຫ້ພວກຂ້າພະອົງຟັງ ເພື່ອພວກຂ້າພະອົງຈະໄດ້ທູນຖວາຍຄວາມແກ້ແດ່ພຣະອົງ"

ແຕ່ແລ້ວຄວາມໝັ້ນໃຈໃນຄວາມຂີ້ຕົວະຂອງພວກເຂົາກໍໝົດໄປເມື່ອກະສັດເນບຸກາດເນສຊາຣ໌ເບື່ອທີ່ຈະໄດ້ຍິນຄວາມເສແສ້ງແກ້ງຕົວະຂອງພວກເຂົາ. ແລະພະອົງກໍຕັດອອກມາວ່າ

(ດານິເອນ 2:5-6) "ເຮົາໄດ້ຕັດສິນໃຈແລ້ວວ່າ ຖ້າພວກເຈົ້າບອກຄວາມຝັນ ແລະແກ້ຄວາມຝັນໃຫ້ເຮົາບໍ່ໄດ້ ເຮົາຈະຂ້າພວກເຈົ້າຢ່າງທາຣຸນ ແລະທຳລາຍບ້ານເຮືອນຂອງພວກເຈົ້າຖິ້ມ ແຕ່ຖ້າພວກເຈົ້າບອກແລະແກ້ຄວາມຝັນໃຫ້ເຮົາໄດ້ ເຮົາຈະໃຫ້ລາງວັນແລະກຽດຕິຍົດອັນຍິ່ງໃຫຍ່ແກ່ພວກເຈົ້າ"

ພວກເຂົາພະຍາຍາມເຮັດໃຫ້ກະສັດບອກຄວາມຝັນຂອງພະອົງ. ແຕ່ພະອົງຮູ້ວ່າພວກເຂົາຕົວະພະອົງ ພະອົງກໍເວົ້າໃສ່ພວກເຂົາດ້ວຍນ້ຳສຽງພິໂລດ ແລະໃນທີ່ສຸດພວກເຂົາກໍສາລະພາບ

(ດານິເອນ 2:10-11)"ບໍ່ມີຄົນໃດດອກໃນພື້ນພິພົບນີ້ທີ່ສາມາດບອກສິ່ງທີ່ພຣະອົງຢາກຮູ້ໄດ້ ບໍ່ມີພຣະຣາຊາອົງຍິ່ງໃຫຍ່ແລະຊົງຣິດອົງໃດໄຕ່ຖາມເຊັ່ນນີ້ກັບພວກຫມໍດູ ຫມໍມົນແລະຫມໍວິຊາອາຄົມ ສິ່ງທີ່ພຣະຣາຊາຖາມມານັ້ນຍາກຫລາຍ ບໍ່ມີໃຜຈະຖວາຍຄຳຕອບແກ່ພຣະອົງໄດ້ ນອກຈາກພວກພຣະຊຶ່ງບໍ່ໄດ້ເປັນມະນຸດ"
ພະຄຳພີເວົ້າວ່າ ກະສັດເນບຸກາດເນສຊາຣ໌ໂກດສຸດໆເລີຍ. ແລະສັ່ງໃຫ້ທະຫານຂ້າພວກໂຫລາຈານ ໝໍມົນ ໝໍຜີເຫລົ່ານີ້ ໜ້າເສຍດາຍ ດານິເອນແລະຊາຍຮີບຣູອີກສາມຄົນ
ໄດ້ຈັດຢູ່ໃນຈຳພວກໝໍມົນໝໍຜີ ເຖິງແມ້ວ່າ ພວກເຂົາບໍ່ໄດ້ຢູ່ກັບພວກເຂົາເຫລົ່ານີ້ກໍຕາມ
ເມື່ອທະຫານເຂົ້າມາຈັບດານິເອນເພື່ອໄປປະຫານ ດານິເອນຕົກໃຈຫລາຍ ແຕ່ດານິເອນກໍຂໍເວລາເພື່ອ

ທີ່ລາວຈະໄປຂໍຄໍາປຶກສາຈາກພະເຈົ້າຜູ້ມີທີ່ປະທັບເທິງສະຫວັນ ແລະຮ້ອງຂໍສະຕິປັນຍາຈາກພະອົງ ເພື່ອທີ່ຈະບອກແລະແກ້ຄວາມຝັນໃຫ້ກັບກະສັດ.

ກະສັດເນບຸກາເນສຊາຣ໌ກໍໃຫ້ເວລາດານີເອນໄປຂໍຄວາມຊ່ອຍເຫລືອຈາກພະເຈົ້າຂອງລາວ ຜູ້ຊົງເປັນພະຜູ້ສ້າງ.

ມັນຊ່າງເປັນພາລະອັນໜັກຫລາຍທີ່ດານີເອນຮັບເອົາໄວ້.
ມັນບໍ່ພຽງແຕ່ກ່ຽວເນື່ອງແຕ່ກັບຊີວິດຂອງດານີ້ເອນຫລືໝູ່ສາມຄົນຂອງລາວ ແຕ່ມັນຍັງກ່ຽງເນື່ອງກັບຊີວິດຂອງໝໍມົນກົນຄາຖາທັງຫລາຍໃນເມືອງບາບີໂລນ.

ດານີເອນກໍກັບເມືອເຮືອນໄປເລົ່າເລື່ອງລາວສູ່ໝູ່ຟັງ.
ພວກເຂົາຕ່າງຮ້ອງຂໍຄວາມຊ່ອຍເຫລືອຈາກພະເຈົ້າໃຫ້ຊົງເປີດເຜີຍຄວາມເລິກລັບທີ່ກະສັດເນບູກາດເນສຊາຝັນເຫັນ ເພື່ອວ່າພວກເຂົາທັງຫລາຍລວມທັງໝໍມົນທຸກຄົນໃນເມືອງບາບີໂລນຈະບໍ່ຖືກປະຫານຊີວິດ.

ຄິດວ່າພວກເຂົາຄົງຈະອະທິຖານຢ່າງໜັກ
ສີ່ຊາຍໜຸ່ມຮີບຣູອະທິຖານຂໍໃຫ້ພະເຈົ້າເປີດເຜີຍຄວາມຝັນຂອງກະສັດຜູ້ໂຫດຮ້າຍ ກ່ອນທີ່ວັນຊະຕາຂາດຂອງເຂົາຈະມາເຖິງ. (ຂໍ້ 16-18)

ພະຄໍາພີກ່າວວ່າພະເຈົ້າຂອງດານີເອນໄດ້ເປີດເຜີຍຄວາມຝັນອັນເລິກລັບແກ່ດານີເອນໂດຍຜ່ານນິມິດ.
ພະເຈົ້າແຫ່ງສະຫວັນໄດ້ຍິນແລະຊື່ນຊົມໃນທຸກຄໍາອະທິຖານ
ດານີເອນສັນລະເສີນພະເຈົ້າແຫ່ງຟ້າສະຫວັນແລະເວົ້າວ່າ

(ດານີເອນ 2:23) “ໂອ ພຣະເຈົ້າແຫ່ງບັນພະບຸຣຸດຂອງຂ້າພຣະອົງ ຂ້າພຣະອົງສັຣເສີນແລະຖວາຍພຣະກຽດແດ່ພຣະອົງ ພຣະອົງຊົງປະທານປັນຍາແລະກຳລັງໃຫ້ຂ້າພຣະອົງ ຊົງຕອບຄຳອ້ອນວອນຂອງຂ້າພຣະອົງ ແລະຊົງໃຫ້ພວກຂ້າພຣະອົງຮູ້ຈັກຕອບພຣະຣາຊາ”

ດານີເອນແລະຊາຍຮີບຣູອີກສາມຄົນຄົງມີຄວາມຕື່ນເຕັ້ນດີໃຈ
ດານີເອນໄດ້ກໍຟ້າວເຂົ້າໄປຫາຜູ້ບັນຊາການທະຫານໃນວັງຄືອາຣີໂອກ ແລະບອກວ່າ

(ດານີເອນ 2:24) “ຂໍຢ່າຂ້າພວກນັກປາດທ້ອນ ໂຜດນຳຕົວຂ້າພະເຈົ້າເຂົ້າໄປເຝົ້າພຣະຣາຊາ ຂ້າພະເຈົ້າຈະແກ້ຄວາມຝັນຖວາຍພຣະອົງ”

ເມື່ອດານີເອນເຂົ້າມາພົບກະສັດເນບູກາດເນສຊາຣ໌ ພະອົງໄດ້ຖາມດານີເອນວ່າລາວສາມາດບອກວ່າ ພະອົງຝັນເຫັນຫຍັງພ້ອມທັງແກ້ຄວາມຝັນຂອງພະອົງໄດ້ບໍ.
ໃຫ້ເຮົາມາເບິ່ງວ່າດານີເອນຕອບກະສັດວ່າແນວໃດ:

(ດານີເອນ 2:27-28) "ຂ້າແດ່ພຣະຣາຊາ ບໍ່ມີຫມໍວິຊາອາຄົມ ຫມໍມົນ ຫມໍມໍ ຫລືຫມໍດູຣືກຍາມຄົນໃດ ດອກບອກພຣະອົງຢ່າງນັ້ນໄດ້ ມີແຕ່ພຣະເຈົ້າເທິງຟ້າສວັນທີ່ຊົງສາມາດເຜີຍຄວາມເລິກລັບທັງຫລາຍ ໄດ້ ຂ້າແດ່ພຣະຣາຊາ ພຣະເຈົ້າໄດ້ຊົງບອກໃຫ້ພຣະອົງຮູ້ສິ່ງທີ່ຈະເກີດຂຶ້ນໃນອະນາຄົດ..."

ດານີເອນບໍ່ໄດ້ຍ້ອງໂຕລາວເອງວ່າລາວສາມາດບອກແລະແກ້ຄວາມຝັນຂອງກະສັດເນບູກາດເນສຊາຣ໌ ໄດ້ ລາວຮູ້ດີວ່າມີພຽງແຕ່ພະເຈົ້າອົງດຽວເທົ່ານັ້ນທີ່ສາມາດຢັ່ງຮູ້ຝັນແລະອານາຄົດ.
ຄົງບໍ່ຕ້ອງສົງໄສ ດານີເອນຕ້ອງໄດ້ສຶກສາພະທຳ ເອຊາຢາ 46:9,10 ມາແນ່ນອນ

(ເອຊາຢາ 46:9,10) "ເພາະເຮົາເປັນພຣະຜູ້ເປັນເຈົ້າ ແລະບໍ່ມີອື່ນໃດອີກ ເຮົາເປັນພຣະເຈົ້າ ແລະບໍ່ມີ ອື່ນໃດເຫມືອນເຮົາ ຜູ້ແຈ້ງຕອນຈົບໃຫ້ຊາບຕັ້ງແຕ່ເລີ້ມຕົ້ນ ແລະແຈ້ງເຖິງສິ່ງທີ່ຍັງບໍ່ໄດ້ທຳເລີຍ ໃຫ້ ຊາບຕັ້ງແຕ່ການໂບຮານກ່າວວ່າ"

ສະຕິປັນຍານີ້ມາຈາກພະເຈົ້າ ຜູ້ຊົງເປີດເຜີຍປະຫວັດສາດຂອງໂລກເມື່ອຕອນ 2600 ປີທີ່ແລ້ວໂດຍ ຜ່ານທາງຝັນທີ່ພະອົງປະທານໃຫ້ກະສັດເນບູກາດເນສຊາຣ໌ ຕອນທຳອິດ
ດານີເອນບອກຂ້າວເຖິງສິ່ງທີ່ກະສັດຝັນເຫັນນັ້ນວ່າແມ່ນຫຍັງແລະໝາຍຄວາມວ່າແນວໃດ
ແຕ່ຍັງບໍ່ທັນບອກລາຍລະອຽດເທື່ອ

(ດານີເອນ 2:29) "ຄືພຣະອົງຊົງຝັນເຖິງເຣື່ອງທີ່ຈະເກີດຂຶ້ນໃນອະນາຄົດ ເພາະພຣະເຈົ້າຜູ້ຊົງເຜີຍ ເຣື່ອງເລິກລັບໄດ້ສະແດງໃຫ້ພຣະອົງຮູ້ເຖິງສິ່ງທີ່ຈະເກີດຂຶ້ນ"

ຫລັງຈາກນັ້ນ ດານີເອນກໍບອກລະອຽດໃຫ້ຮູ້ເຖິງສິ່ງກະສັດຝັນເຫັນ

(ດານີເອນ 2:31) "ຂ້າແດ່ພຣະຣາຊາ ໃນນິມິດຂອງພຣະອົງນັ້ນ ພຣະອົງໄດ້ທອດພຣະເນດເຫັນຮູບ ຂນາດໃຫຍ່ຢືນຢູ່ຊ້ອງພຣະພັກ ຮູບນີ້ສ່ອງແສງເຫລື້ອມແລະເປັນຕາຢ້ານ"

ເມື່ອໄດ້ຍິນແລ້ວ ກະສັດເນບູກາດເນສຊາຣ໌ຄົງຕັດອອກມາໄດ້ຄວາມຕື່ນເຕັ້ນດີໃຈ
"ແມ່ນແລ້ວ ແມ່ນແລ້ວ! ມີຮູບຂະໜາດໃຫຍ່ສູງກວ່າທຸກສິ່ງ" ດານີເອນໄດ້ບອກພາບຄວາມຝັນຢ່າງ ແຈ່ມແຈ້ງຈົນເຮັດໃຫ້ກະສັດເນບູກາດເນສຊາຣ໌ບໍ່ມີຂໍ້ສົງໃສວ່າສິ່ງທີ່ລາວບອກແລະສິ່ງທີ່ກະສັດຝັນເຫັນ ແມ່ນສິ່ງດຽວກັນ. ແລະດານີເອນກໍເວົ້າຕໍ່ໄປອີກວ່າ

(ດານີເອນ 2:32-35) "ຫົວຂອງຮູບນີ້ເປັນຄຳຢ່າງດີທີ່ສຸດ ເອິກແລະແຂນເປັນເງິນ ແອວແລະກະໂພກເປັນທອງສຳລິດ ຂາເປັນເຫລັກ ຕີນເປັນເຫລັກປົນດິນ"

"ໜ້າເຫລືອເຊື່ອແທ້ໆ, ດານີເອນບັນຍາຍເຖິງສິ່ງຕ່າງໆທີ່ໃນຕົນໂຕຂອງຮູບພາບ
ຄ້າຍຄືກັນກັບວ່າລາວໄດ້ເຫັນຄວາມຝັນນັ້ນດ້ວຍໂຕລາວເອງ. ຫົວເປັນຄຳເຫລື້ອມເສາະໃສ.
ເອິກແລະແຂນຂາເປັນເງິນເຫລື້ອມແວວວາວ ແອວແລະກະໂພກເປັນທອງສຳລິດ. ຂາເປັນເຫລັກ
ແລະຕີນເປັນເຫລັກປົນດິນ ຂະນະທີ່ພະອົງທອດພະເນດຢູ່ນັ້ນ
ມີຫີນໃຫຍ່ກ້ອນໜຶ່ງແຕກອອກມາເອງໂດຍບໍ່ມີໃຜເຮັດ
ຫີນນີ້ໄດ້ກະທົບໃສ່ຕີນເຫລັກປົນດິນຂອງຮູບນັ້ນຈົນແຕກໄປ ແລ້ວທັນໃດນັ້ນ ສ່ວນທີ່ເປັນເຫລັກ
ເປັນດິນ ເປັນທອງສຳລິດ ເປັນເງິນແລະຄຳກໍແຕກໝຸ່ນໄປ ເໝືອນເຂົ້າລີບໃນລານ ທີ່ລົມພັດປິວໄປ
ໃນຍາມຮ້ອນ ໂດຍບໍ່ມີຮ່ອງຮອຍໃຫ້ພົບເຫັນເລຍ

ຄິດວ່າກະສັດຄົງຕົກໃຈກົວເປັນຢ່າງແຮງ ເມື່ອໄດ້ຍິນວ່າຫີນທີ່ອອກມາຈາກທີ່ໃດກໍບໍ່
ຮູ້ແລະມາດ້ວຍຄວາມໄວຢ່າງສູງຈະມາກະທົບໃສ່ຕີນຂອງຮູບປັ້ນເຮັດໃຫ້ຮູບປັ້ນນັ້ນແຕກເປັນຝຸ່ນລະ
ອຽດປິວໄປຕາມອາກາດໂດຍບໍ່ມີຮ່ອງຮອຍພົບເຫັນເລີຍ.
ແລະກ້ອນຫີນທີ່ຕົກກະທົບຮູບນັ້ນກໍກາຍເປັນພູໃຫຍ່ເຕັມພື້ນພິພົບ.

"ຖືກຕ້ອງແລ້ວດານີເອນ" ກະສັດຄົງເວົ້າຢ່າງນີ້ "ມີຫີນອອກມາຈາກບ່ອນໃດກໍບໍ່ຮູ້
ມາຕົກກະທົບໃສ່ຮູບແລ້ວຫີນກໍກາຍເປັນພູໃຫຍ່ເຕັມໂລກ"
ສິ່ງທີ່ດານີເອນເຫລົ່າເປັນຄືສິ່ງທີ່ກະສັດຝັນເຫັນ. ກະສັດນີ້ຄົງປະຫລາດໃຈຫລາຍທີ່ມີຄົນມາບອກຢ່າງ
ລະອຽດເຖິງສິ່ງທີ່ຝັນປານກັບວ່າຊາຍຄົນນັ້ນເຫັນຄວາມຝັນ
ສິ່ງໜຶ່ງທີ່ກະສັດແນ່ໃຈຄືບໍ່ມີມະນຸດໃດໃນໂລກບອກເລື່ອງໃຫ້ດານີເອນຟັງ ບໍ່ມີຄົນໃດໃນໂລກທີ່ສາມາດ
ຮູ້ຄວາມຝັນຂອງຄົນອື່ນ.ຄົງມີແຕ່ພະຜູ້ເປັນເຈົ້າເທົ່ານັ້ນທີ່ສາມາດບອກສິ່ງເຫລົ່ານີ້ໄດ້
ກະສັດຄົງສົງໄສວ່າສິ່ງທີ່ພະອົງຝັນນັ້ນໝາຍເຖິງຫຍັງ ພວກເຮົາກໍອາດຄິດຄືກັນກັບກະສັດ
ຄວາມຝັນຂອງກະສັດເນບຸກາດເນສຊາຣໄດ້ພະຍາກອນເຖິງການກຳເນີດແລະການຫລົ້ມສະຫລາຍຂອງ
ອານາຈັກສຳຄັນຕ່າງໆໃນໂລກ
ອານາຈັກທີ່ຄວາມຝັນຂອງກະສັດໝາຍເຖິງນັ້ນມີອິດທິພົນຕໍ່ຊົນຊາດຕ່າງໆໃນໂລກໂດຍສະເພາະໃນສະ
ໄໝໃໝ່

ພຽງແຕ່ພະຄຳຂອງພະເຈົ້າສອງສາມຄຳເທົ່ານັ້ນກໍສາມາດບົ່ງບອກສິ່ງຕ່າງໆ ນັບຕັ້ງ
ແຕ່ສະໄໝບາບີໂລນຮຸ່ງເຮືອງຄື 600 ປີ ກ່ອນ ຄ.ສ. ຈົນໄປເຖິງຈຸດໃຈສຳຄັນຂອງປະຫວັດສາດ
ໂລກ

ດານີເອນຮູ້ໃຈຄວາມສຳຄັນຂອງຄວາມຝັນນັ້ນ ລາວເບິ່ງໄປທີ່ກະສັດແລ້ວເວົ້າວ່າ

(ດານີເອນ 2:38) "ພະອົງເປັນຫົວທອງຄຳນັ້ນ" ບາບີໂລນຄືຫົວ ເປັນຊົນຊາດແຫ່ງທອງຄຳບໍລິສຸດ.

ເມື່ອໄດ້ຟັງຄຳບັນລະຍາຍຂອງດານີເອນແລ້ວກະສັດກໍຄົງຍິ້ມອອກມາດ້ວຍຄວາມພຶງພໍໃຈ ບາບີໂລນມີກອງກຳລັງແຂ້ມແຂງປາບທຸກຫົວເມືອງ ແລະເປັນເມືອງທີ່ຮຸ່ງເຮືອງແບບບໍ່ເມືອງເມືອງອື່ນໃດທີ່ສາມາດປຽບໄດ້. ຕຶກອາຄານຕ່າງໆໃນກຸງບາບີໂລນໄດ້ຖືກປະດັບໄປດ້ວຍທອງຄຳ ເຊິ່ງໄດ້ຖືກຂຽນໄວ້ໃນບົດຂຽນຂອງນັກຄົ້ນຄວ້າປະຫວັດສາດ ນີ້ສິ່ງທີ່ລາວໄດ້ຂຽນ

"ມີທີ່ຕັ້ງຢູ່ສວນທາງທິດຕາເວັນອອກ ເປັນຮູບສີ່ຫລ່ຽມມົນທົນ... ພ້ອມທັງມີຄູນ້ຳອ້ອມຮອບ. ປະຕູທາງເຂົ້າເຮັດດ້ວຍທອງເຫລືອງ ຢູ່ໃນສວນທີລະບຽງທີ່ສູງສະຫງ່າ..ເປັນເໝືອນພະລາດຊະວັງ. ໂລກທັງໂລກກົ້ມກາບລົງທີ່ຕີນຂອງເມືອງນັ້ນ ປຽບດັ່ງລາຊະນີທີ່ບໍ່ມີໃຜປຽບໄດ້ກັບພະບາລະມີ. ຫົວທີ່ເປັນທອງຄຳນັ້ນເປັນຕົວແທນຂອງເມືອງນີ້" (ໂດຍ: ຢູໄຣອາ ສມິດທ໌ ຜູ້ຂຽນໜັງສື ຄຳທຳນວາຍໃນພະທຳດານີເອນແລະພະນິມິດ. ໜ້າ 33, 34)

ສວນຕ່າງໆໃນນະຄອນບາບີໂລນນັ້ນແມ່ນເປັນໜຶ່ງໃນເຈັດສິ່ງມະຫັດສະຈັນບູຮານຂອງໂລກ. ຖ້າດານີເອນເປັນຄົນທີ່ຢາກສ້າງຊື່ສຽງເພື່ອໂຕລາວເອງ ລາວກໍຄົງຈະຢຸດແກ້ຄວາມຝັນຂອງກະສັດໄວ້ເທົ່ານັ້ນ. ແຕ່ຍ້ອນລາວມີຂ່າວສານຈາກພະເຈົ້າທີ່ພະອົງປະສົງຢາກໃຫ້ໂລກຮູ້ ຂ່າວສານນີ້ບໍ່ແມ່ນມີມາເຖິງແຕ່ຄົນໃນສະໄໝຂອງດານີເອນ ແຕ່ຍັງມີມາເຖິງທຸກຄົນໃນຕອນທ້າຍຂອງປະຫວັດສາດໂລກ. ດານີເອນເວົ້າອອກມາດ້ວຍຄວາມກ້າແຕ່ຖ່ອມໂຕໃຫ້ກະສັດຟັງວ່າ

(ດານີເອນ 2:39) "ຕໍ່ຈາກພຣະອົງໄປຈະມີຣາຊອານາຈັກນຶ່ງອີກ ເປັນຣາຊອານາຈັກນ້ອຍກວ່າຂອງພຣະອົງ"

ຮອຍຍິ້ມແຫ່ງຄວາມຕື່ນເຕັ້ນດີໃຈຂອງກະສັດກໍຄົງໝົດໄປເມື່ອໄດ້ຍິນດານີເອນເວົ້າເຊັ່ນນີ້. ກະສັດຜູ້ທະນົງຂອງບາບີໂລນຄົງບໍ່ເຄີຍຄິດວ່າຈະມີຊົນຊາດອື່ນມາປົກຄອງໂລກ. ຄວາມຈິງແລ້ວ ນັກບູຮານນະຄະດີໄດ້ຂຸດເອົາແຜ່ນຫີນທີ່ກະສັດເນບຸກາດເນສຊາຣໄດ້ຂຽນຄຳຈາລຶກໃສ່ ຄຳຈາລຶກມີດານີ້

"ຂ້ອຍໄດ້ສ້າງປ້ອມປາການແຫ່ງເມືອງເອຊາກິລາແລະເມືອງບາບີໂລນ ແລະຂ້ອຍໄດ້ຊື່ສຽງແຫ່ງການຄອງບັນລັງຂອງຂ້ອຍຕະຫລອດໄປ"

(ດານິເອນ 4:30) ພະຄຳພີໄດ້ກ່າວວ່າກະສັດເນບຸກາດເນສຊາຣ໌ຜູ້ທະນົງໄດ້ເວົ້າວ່າ "ກຸງບາບີໂລນນີ້ເປັນເມືອງໃຫຍ່ຫລາຍ ເຮົາໄດ້ສ້າງມັນມາໃຫ້ເປັນເມືອງຫລວງຂອງເຮົາ ເພື່ອສະແດງເຖິງອຳນາດວາສນາ ແລະກຽດຕິຍົດຊື່ສຽງຂອງເຮົາ"

ຢ່າງໃດກໍຕາມ ພະເຈົ້າໄດ້ຕັດວ່າ ຈະມີຜູ້ມີອຳນາດມາໂຄ່ນລົ້ມອານາຈັກທອງຄຳ ແຫ່ງເມືອງບາບີໂລນ ຕອນທີ່ດານິເອນມີຊີວິດຢູ່ເຂົາກໍໄດ້ເຫັນເຫດການນີ້
ໃນສະໄໝທີ່ຫລານຂອງເນລູກາດເນສຊາຣ໌ຄືເບນຊັສຊາຂຶ້ນຄອງລາດ ລາວມີຍິ່ງທໍລະນົງຫລາຍແລະແລ້ວລາວກໍຖືກ ໄຊຣັສ (Cyrus the Mede) ເຂົ້າມາຍຶດເອົາກຸງບາບີໂລນ. ໃນວັນທີ 13 ເດືອນ 18 539 ປີກ່ອນ ຄ.ສ. ກຸງບາບີໂລນທອງຄຳໄດ້ມາຖຶງຈຸດຈົບຢ່າງໜ້າອັບໜ້າ.
ນະຄອນນີ້ໄດ້ຖືກທຳລາຍລົງຕາມຄຳພະຍາກອນຂອງພະເຈົ້າທຸກຢ່າງ

200 ປີກ່ອນທີ່ນະຄອນບາບີໂລນຈະຫລົ້ມ, ພະເຈົ້າຕັດຜ່ານຄຳພະຍາກອນຂອງ ເອຊາຢາວ່າ "ໄຊຣັສເປັນກະສັດທີ່ພຣະຜູ້ເປັນເຈົ້າໄດ້ເອົານໍ້າມັນຊະໂລມຫົດສົງ ໃຫ້ເປັນກະສັດພິເສດຂອງພຣະອົງ ພຣະອົງຊົງແຕ່ງຕັ້ງໄຊຣັສເພື່ອຕີຊະນະປະຊາຊາດທັງຫລາຍ ເພື່ອປົດອຳນາດຂອງກະສັດທັງຫລາຍ ພຣະຜູ້ເປັນເຈົ້າຈະຊົງໄຂປະຕູເມືອງຕ້ອນຮັບໄຊຣັສ" (ອາຊາຢາ 45:1)

ພະເຈົ້າໄດ້ໃຊ້ມາບອກເຖິງ ໄຊຣັສ 150 ປີ ກ່ອນລາວເກີດ. ໄຊຣັສ ບໍ່ສາມາດທະລຸກຳແພງໄດ້ ເພາະວ່າກຳແພງນັ້ນສູງແລະໜາຫລາຍ ເພາະສະນັ້ນລາວຈິ່ງຄິດຫາວິທີໃໝ່
ລາວວາງແຜນເຂົ້າໄປທາງນໍ້າທີ່ຜ່ານໃຈກາງເມືອງ ແລະກອງທັບ
ຂອງລາວຈະດຳລົງນໍ້າຈົນກວ່າພວກເຂົາຈະພົບທາງເຂົ້າເມືອງ
ຄົນໃນເມືອງນັ້ນຜູ້ທີ່ມັກງ່າຍຫລືເປັນຄົນທໍລະຍົດໄດ້ປ່ອຍປະປະຕູທອງໂດຍບໍ່ມີຄົນເຝົ້າຍາມແລະເປີດຢູ່ ທະຫານຂອງໄຊຣັສໄດ້ເຂົ້າໄປໃນຕົວເມືອງ ຂ້າກະສັດແລະຂ້າໃຊ້ບໍລິວານພະອົງ ແລະພວກເຂົາກໍດື່ມວາຍຈາກໂຖທອງຄຳທີ່ກະສັດເນບຸກາດເນສຊາຣໄດ້ປຸ້ນເອົາມາຈາກວິຫານໂຊໂລໂມນຕອນທີ່ພະອົງໄປຍຶດກຸງເຢຣູຊາເລັມ ເຊິ່ງເປັນໄປຕາມຄຳທຳນວາຍຂອງດານິເອນ

ອານາຈັກໜຶ່ງທີ່ມີເອິກແລະແຂນເງິນເປັນເຄື່ອງໝາຍທີ່ນ້ອຍກວ່າບາບີໂລນຈະມີອຳນາດເໜືອບາບີໂລນແນ່ນອນອຳນາດປະສົມລະຫວ່າງ ເມເດສ ແລະ ເປີເຊຍ ທຽບບໍ່ໄດ້ກັບອຳນາດທີ່ຍິ່ງໃຫຍ່ຂອງບາບີໂລນ ແຕ່ວ່າອຳນາດປະສົມນີ້ກໍໄດ້ຄອບຄອງຕາເວັນອອກກາງເປັນເວລາສອງສັດຕະວັດ
ຄຳທຳນາຍຂອງດານິເອນກໍຍັງບອກວ່າ ອານາຈັກເງິນນີ້ກໍຈະມາເຖິງຈຸດຈົບເຊັ່ນກັນ

(ດານິເອນ 2:39) "...ແລະຫລັງຈາກນັ້ນແມ່ນຣາຊອານາຈັກທີ່ສາມ ເປັນຣາຊອານາຈັກທອງສຳລິດຈະມີອຳນາດແຜ່ໄປທົ່ວໂລກ"

ເລື່ອງນີ້ເກີດຂຶ້ນຈິງບໍ່? ແນ່ນອນ ເກີດຂຶ້ນຈິງ.
ຄຳທຳນວາຍຂອງທ້ອງ ແລະຂາທີ່ເປັນທອງສຳລິດໄດ້ເປັນຈິງເມື່ອນາຍທະຫານໜຸ່ມຜູ້ສະຫງ່າ ຄື ມະຫາລາດ ອາເລັກຊັນເດີໄດ້ບຸກທຳລາຍ ດາຣິອັສ ສາມ (Darius III) ແຫ່ງເປີເຊຍ ໃນສະໄໝສົງຄາມຂອງ ອາຣ໌ເບລາ 331 ປີ ກ່ອນ ຄ.ສ. ແລະອານາຈັກທີ່ສາມຂອງໂລກນັ້ນຄືກຣີກ ພຽງແຕ່ 25 ປີເທົ່ານັ້ນ ຊາຍໜຸ່ມ ອາເລັກຊັນເດີ ໄດ້ກາຍເປັນຜູ້ປົກຄອງທຸກອານາຈັກໃນໂລກ

ນັກປະຫວັດສາດຂອງກຣີກ ອາຣິອັນ ໄດ້ຂຽນກ່ຽວກັບ ອາເລັກຊັນເດີ ວ່າ “ຂ້າພະເຈົ້າຍອມຮັບວ່າ ບໍ່ມີຊົນຊາດໃດ ເມືອງໃດ ແລະ ຄົນໃດ....ທີ່ບໍ່ຮູ້ຊື່ຂອງ ອາເລັກຊັນເດີ... ເບິ່ງຄືວ່າມີອຳນາດບໍລິສຸດຄອຍເຝົ້າເບິ່ງທັງການກຳເນີດແລະການກະທຳຂອງລາວ”

ຊຸດເກາະທີ່ລາວໃສ່ເມື່ອອອກຮົບນັ້ນເຮັດດ້ວຍທອງສຳລິດ ເຊິ່ງເປັນໂລຫະທີສາມໃນຄວາມຝັນຂອງ ກະສັດເນບູກາດເນສຊາຣ໌. ອາເລັກຊັນເດີເປັນໄຂ້ຕາຍກ່ອນລາວໄດ້ 33 ປີ. ແລະຫລັງຈາກນັ້ນອານາ ຈັກຂອງລາວກໍອ່ອນກຳລັງລົງແລະແຕກເປັນຫລາຍໆອານາຈັກ ແລະໃນທີ່ສຸດ “ໃນວັນທີ 22 ເດືອນ 6 168 ປີ ກ່ອນ ຄ.ສ. ເຊິ່ງແມ່ນ 144 ປີ ຫລັງຈາກລາວຕາຍ ທີ່ສະໜາມຮົບ ໄພດ໌ນາ ອານາຈັກ ຂອງມະຫາລາດອາເລັກຊັນເດີຜູ້ຍິ່ງໃຫຍ່ກໍຫລົ້ມສະຫລາຍໄປ” (ອ້າງອີງຈາກໜັງສືປະຫວັດສາດໂຣມ ເຫລັ້ມ 3 ບົດທີ 10)

ຕໍ່ມາກໍໄດ້ມີອານາຈັກໂຫດຫ້ຽມເຂົ້າມາແທນ ຈຳໄດ້ຫລືບໍ່ວ່າພະເຈົ້າໄດ້ພະຍາກອນວ່າຈະມີສີ່ອານາຈັກ ເທື່ອລະອານາຈັກຈະຂຶ້ນມາຄອງໂລກ

(ດານນີເອນ 2:40) “ແລ້ວຈະມີຣາຊອານາຈັກທີ່ສີ່ ເປັນອານາຈັກທີ່ມີອຳນາດແລະແຂງດັ່ງເຫລັກ” ຊຶ່ງ ສາມາດຕີສິ່ງທັງຫລາຍໃຫ້ຫັກແລະແຕກຫມຸ່ນໄດ້ ຣາຊອານາຈັກນີ້ຈະຫັກແລະທັບມ້າງຣາຊອານາຈັກ ກ່ອນໆທັງປວງ. ຂາທີ່ເປັນເຫລັກນັ້ນອຳນາດແຫ່ງການລ້າງຜານຢ່າງບໍ່ປານີຂອງອານາຈັກທີສີ່. ຈັກ-ກະພັດຂອງອານາຈັກນີ້ໄດ້ຮ້ອງໂຕເອງວ່າພະເຈົ້າ ແລະບອກໃຫ້ທຸກໆຄົນນະມັດສະການ ແລະ ເຊື່ອແຕ່ຈັກກະພັດອົງນີ້.

ໃນຕອນທີ່ລັດຖະບານໂຣມມັນປົກຄອງ ສອງເຫດການຍິ່ງໃຫຍ່ທີ່ເກີດຂຶ້ນຄື

1. ພະເຍຊູໄດ້ມາປະສູດທີ່ເບດທ໌ເລເຮັມ.
ຜູ້ປົກຄອງໂຣມມັນໄດ້ອອກຄຳສັ່ງໃຫ້ຂ້າເດັກນ້ອຍຊາຍທຸກຄົນໃນເມືອງເບດທ໌ເລເຮັມທີ່ອາຍຸສອງປີລົງ ມາ. ພະອົງຫວັງວ່າຈະຂ້າພະເຍຊູ

2. ຜູ້ປົກຄອງໂຣມມັນໄດ້ອະນຸຍາດໃຫ້ຄົນຢິວຄຸມໂຕພະເຍຊູ ແລະໃຫ້ເຂົາຕຶ່ງພະອົງ

ທະຫານໂຣມມັນໄດ້ຕອກຕະປູຕຶງພະເຍຊູທີ່ໄມ້ກາງແຂນ ແລະພວກເຂົາກໍປະທັບຕາໄວ້ທີ່ອຸໂມງສົບຂອງພະອົງເພື່ອທີ່ຈະກັກພະສົບຂອງພະອົງໄວ້ຂ້າງໃນ.
ປະຈຸບັນນີ້ລັກສະນະຂອງຄຳທຳນວາຍໄດ້ປ່ຽນໄປ
ບໍ່ມີອານາຈັກໃດຫລືປະເທດໃດໃນໂລກທີ່ຈະຕົກຢູ່ໃຕ້ອຳນາດຂອງໂຣມມັນ
ດານີເອນໄດ້ຂຽນໄວ້ວ່າ

(ດານິເອນ 2:41,43) "ທີ່ພຣະອົງທອດພຣະເນດເຫັນຕີນແລະນິ້ວຕີນເປັນດິນປົນເຫລັກນັ້ນ ຫມາຍຄວາມວ່າຈະເປັນຣາຊອານາຈັກປະສົມ ມັນຈະມີຄວາມແຂງຂອງເຫລັກປົນຢູ່ດ້ວຍ ເພາະວ່າໄດ້ມີເຫລັກປະສົມຢູ່ກັບດິນຫນຽວ ນິ້ວຕີນເປັນເຫລັກປົນດິນນັ້ນ ຫມາຍຄວາມວ່າຣາຊອານາຈັກນັ້ນຈະແຂງແຮງແຕ່ເສັງຫາຍງ່າຍ ທີ່ພຣະອົງທອດພຣະເນດເຫັນເຫລັກປະສົມດ້ວຍດິນຫນຽວນັ້ນ ພວກຜູ້ປົກຄອງຣາຊອານາຈັກນັ້ນ ຈະພຍາຍາມຮວບຮວມຄອບຄົວຂອງເຂົາເຂົ້າກັນດ້ວຍການແຕ່ງງານ ແຕ່ພວກເຂົາຈະເຮັດບໍ່ໄດ້ຢ່າງດຽວກັບເຫລັກທີ່ປະສົມເຂົ້າກັບດິນບໍ່ໄດ້"

ຈະເວົ້າອີກຢ່າງໜຶ່ງກໍຄື ຄຳທຳນວາຍໄດ້ເວົ້າວ່າ ບໍ່ແມ່ນອານາຈັກທີຫ້າ ແຕ່ແມ່ນອານາຈັກຍ່ອຍທີ່ແຍກອອກມາຈາກອານາຈັກເຫລັກໂຣມມັນ ອານາຈັກໂຣມຈະຖືກແຍກອອກເປັນຫລາຍໆອານາຈັກ. ພະຄຳ ດານິເອນ 7:24 ໄດ້ເວົ້າວ່າ ຈະມີ 10 ອານາຈັກອອກມາຈາກ ອານາຈັກທີ 4.

ອານາຈັກເຫລັກໂຣມມັນທີ່ຍິ່ງໃຫຍ່ຂຶ້ນມາມີອຳນາດປົກຄອງເກືອບຮອດ 600 ປີ ແລ້ວກໍແຕກສະຫລາຍໄປ. ເມືອງທີ່ສະຫງ່າງາມ ເຕັມໄປດ້ວຍການສໍ້ໂກງ ແລະໄຮ້ສິນທຳ
ຢ່າງໂຣມມັນໄດ້ສູນເສຍຄວາມແຂງ ແກ່ງ
ແລະກໍຖືກຊົນເຜົ່າທີ່ໂຫດຮ້າຍຕ່າງໆເຂົ້າມາຣຸກຮານທຳລາຍ(Video: 4 Sec) ລະຫວ່າງປີ ຄ.ສ. 351 ແລະ 476 ຈັກກະພັດ ອໍກັສຕັສ ໄດ້ຖືກປົດ
ຕຳແໜ່ງແລະອານາຈັກໂຣມມັນກໍຖືກແບ່ງແຍກເປັນຫລາຍອານາຈັກນ້ອຍຕາມທີ່ຕີນແລະນິ້ວຕີນດິນແລະເຫລັກຂອງຮູບນັ້ນເປັນຕົວແທນ

(ດານິເອນ 2:42-43) "...ຣາຊອານາຈັກນັ້ນຈະແຂງແຮງແຕ່ເສັງຫາຍງ່າຍ ທີ່ພຣະອົງທອດພຣະເນດເຫັນເຫລັກປະສົມດ້ວຍດິນຫນຽວນັ້ນ ພວກຜູ້ປົກຄອງຣາຊອານາຈັກນັ້ນ ຈະພຍາຍາມຮວບຮວມຄອບຄົວຂອງເຂົາເຂົ້າກັນດ້ວຍການແຕ່ງງານ ແຕ່ພວກເຂົາຈະເຮັດບໍ່ໄດ້ຢ່າງດຽວກັບເຫລັກທີ່ປະສົມເຂົ້າກັບດິນບໍ່ໄດ້"

ອານາຈັກໂຣມມັນໄດ້ຖືກຊົນຊາດທີ່ໂຫດຮ້າຍຣຸກຮານແລະກໍຖືກແບງແຍກ.
ການແບ່ງແຍກນີ້ແມ່ນໝາຍເຖິງການກໍຕົວຂອງ 10 ຊົນຊັ້ນໃນຢູໂຣບປະຈຸບັນ

ນັກປະຫວັດສາດສ່ວນໃຫຍ່ໄດ້ລຽງ 10 ຊົນຊາດທີ່ໂຫດຮ້າຍ ແລະກໍມີດັ່ງນີ້

| <u>**ອານາຈັກ**</u> | <u>**ໄດ້ແກ່ປະເທດ**</u> |
|---|---|
| ອາລາແມນນີ (Alamanni) | ເຢຍລະມັນ (Germans) |
| ແຟຣງສ໌ (Franks) | ຝະຣັ່ງ (French) |
| ຊາສົນສ໌ (Saxons) | ອັງກິດ (English) |
| ໄວສີໂກດທ໌ (Visigoths) | ສະເປນ (Spanish) |
| ເບີກັນດຽນ( Burgundians) | ສະວິດ (Swiss) |
| ລອມບາຣາດສ໌ (Lombarads) | ອີຕາລີ (Italians) |
| ຊູວີ (Suevi) | ໂປຕູເກດ (Portuguese), ແວນດອນລ໌ (Vandals), ເຮຣູໄລ (Heruli) ແລະ ອອດສໂຕຣໂກດທ໌( Ostrogoths) (ສາມປະເທດສຸດທ້າຍນີ້ ແມ່ນຫລົ້ມສະຫລາຍໄປແລ້ວ. |

ພະເຈົ້າໄດ້ຕັດວ່າອານາຈັກເຫລົ່ານີ້ຈະບໍ່ມີມື້ກັບມາລວມເຂົ້າກັນເປັນອານາຈັກໃຫຍ່ທີ່ປົກຄອງໂລກອີກຈັກເທື່ອ ເລີຍເຮັດໃຫ້ຊົນຊາດເຫລົ່ານີ້ມີຂໍ້ຈຳກັດໃນການກະທຳຂອງເຂົາ ພະອົງຕັດວ່າ ເຖິງແມ້ວ່າພວກເຂົາທີ່ມີຊົນຊາດຊົນເຜົ່າຕ່າງກັນແຕ່ງງານກັນເພື່ອທີ່ພວກເຂົາທັງໝົດຈະເປັນອັນໜຶ່ງອັນດຽວ ພວກເຂົາກໍຈະບໍ່ມີວັນລວມໂຕກັນເປັນໜຶ່ງດຽວໄດ້ ໃນສະຖານທີ່ໜຶ່ງຂອງປະເທດເດັນໝາກ

ແຜນພູມສະແດງຍາດພີ່ນ້ອງວົງຕະກູນຂອງລາດຊະວົງໜຶ່ງມີສະແດງໃຫ້ເຫັນວ່າ ພວກເຂົາທຸກຄົນເປັນພີ່ນ້ອງກັນມີຄວາມຜູກພັນກັນໝົດ ພວກເຂົາຫວັງວ່າສິ່ງນີ້ມັນຈະເຮັດໃຫ້ມີສົງຄາມ ແຕ່ແລ້ວສົງຄາມກໍຍັງມີ ພວກເຂົາກໍຍັງມີຄວາມຂັດໝົກຂັດໃຈກັນ. ສົງຄາມໃນຢູໂຣບທີ່ເກີດຂຶ້ນສ່ວນໃຫຍ່ແມ່ນເປັນຍ້ອນການຜິດຖຽງກັນລະຫວ່າງຄົນໃນລາດຊະວົງ.
ພະເຈົ້າໄດ້ໃຫ້ຄຳພະຍາກອນວ່າພວກເຂົາຈະບໍ່ມີ້ເປັນອັນໜຶ່ງອັນດຽວ ພວກເຂົາພະຍາຍາມນຳເອົາອານາຈັກຍ່ອຍຕ່າງໆຂອງໂຣມມັນກັບມາເປັນອັນໜຶ່ງອັນດຽວ ແຕ່ພວກເຂົາບໍ່ມີວັນທີ່ຈະເຮັດໄດ້ ເຫລັກແລະດິນເຂົ້າກັນບໍ່ໄດ້ສັນໃດ ພວກເຂົາກໍເຂົ້າກັນບໍ່ໄດ້ສັນນັ້ນ.
ໃນອະດີດກໍມີຫລາຍຄົນທີ່ພະຍາຍາມລວບລວມຊົນຊາດທີ່ແຍກໂຕອອກມາຈາກອານາຈັກໂຣມມັນ

ພວກເຮົາບາງຄົນອາດບໍ່ເຄີຍໄດ້ຍິນຊື່ຂອງຜູ້ນຳທີ່ຈະກ່າວຕໍ່ໄປນີ້ທີ່ພະຍາຍາມ ລວບລວມທຸກປະເທດທຸກຊົນຊາດໃນໂລກໃຫ້ເປັນອັນໜຶ່ງອັນດຽວ ແຕ່ແລ້ວພວກເຂົາກໍພົບກັບຄວາມລົ້ມເຫລວແລະຖືກໂຄ່ນລົ້ມ. ນັ້ນກໍຄື ຊາເລເມນ (Charlemagne), ຊາ ຫ້າ (ຊາ ຜູ້ທີຫ້າ) (Charles V), ຫລຸຍສ໌ ສິບສີ່ (ຫລຸຍສ໌ ຜູ້ທີສິບສີ່) (Louis XIV) ນະໂປລຽນ (Napoleon), ເຄເສີ ວິລເຮມ (Kaiser Wilhelm), ຮິດເລີ (Hitler). ນັກລົບຜູ້ຍິ່ງໃຫຍ່ຂອງຝະຣັ່ງໃນຕົ້ນປີ 1800

ນະໂປລຽນໄດ້ຖືກຂັບໄລ່ແລະໜີໄປຢູ່ເກາະເອວບາ ແລະ ໄດ້ສາລະພາບອອກມາວ່າ
ພະເຈົ້າຍິ່ງໃຫຍ່ຫລາຍໂພດສຳລັບລາວ ພະເຈົ້າຍິ່ງໃຫຍ່ຫລາຍໂພດສຳລັບທຸກຄົນ

ພະເຈົ້າໄດ້ຕັດວ່າ "ພວກເຂົາຈະບໍ່ສາມາດລວມເຂົ້າກັນ" ຈະບໍ່ມີຜູ້ໃດທີ່ສາມາດປົກຄອງໂລກທັງໂລກ
ຫລືຈະເວົ້າອີກຢ່າງໜຶ່ງກໍຄືວ່າຊົນຊາດແລະປະເທດຕ່າງໆຈະມີຜູ້ຂ້ຳຂອງເຂົາ. ເຖິງຢ່າງໃດກໍຕາມ
ກໍຍັງມີຫລາຍຄົນພະຍາຍາມຈະລວມປະເທດຕ່າງໆໃນທະວີບຢູໂຣບເຂົ້າກັນ ເປັນປະເທດດຽວ
ແຕ່ວ່າເບິ່ງແລ້ວພວກເຂົາຄົງຢູ່ຮວມກັນບໍ່ໄດ້ ກໍເໝືອນທີ່ພະເຈົ້າໄດ້ຕັດ.
ພວກເຂົາອາດຈະມາຢູ່ຮວມກັນ ແຕ່ພວກເຂົາຈະບໍ່ຖືກກັນ

ເນບຸກາດເນສຊາຣ໌ຄົງຄິດໄປຄິດມາແລະງົງໄປງົງມາກ່ຽວກັບຄຳທຳນວາຍ
ພະເຈົ້າໄດ້ພະຍາກອນເຖິງການດັບສິ້ນຂອງສີ່ອານາຈັກໃຫຍ່ຂອງໂລກ. ພະອົງໄດ້ພະຍາກອນວ່າ
ອານາຈັກໂຣມມັນຈະຖືກໂຄ່ນລົ້ມແລະແບ່ງແຍກເປັນຫລາຍຊົນຊາດ, ແລະເຈັດປະເທດໃນທະວີບ
ຢູໂຣບປະຈຸບັນກໍແມ່ນຊົນຊາດທີ່ແຍກອອກມາຈາກອານາຈັກໂຣມມັນ. ບາງຊົນຊາດອາດແຂງແຮງ
ແລະບາງຊົນຊາດອາດອ່ອນແອ
ແຕ່ແນວໃດກໍຕາມທຸກຊົນຊາດກໍຖືກແບ່ງແຍກໂດຍບໍ່ມີຫວັງວ່າຈະກັບມາລວມກັນໄດ້ອີກ

ສິ່ງຈະເກີດຂຶ້ນຕໍ່ໄປແມ່ນຫຍັງ?

ໃນຄຳແກ້ຄວາມຝັນກ່ຽວກັບຮູບນັ້ນ ໄດ້ມີຈຸດໜຶ່ງທີ່ນຳຄວາມຍິນດີແລະຄວາມໝັ້ນໃຈມາໃຫ້ ເຊິ່ງເປັນ
ຈຸດທີ່ສຳຄັນແລະສ້າງຄວາມປະຫລາດໃຈ ນັ້ນກໍຄື

(ດານີເອນ 2:44-45) "ໃນສະໄໝພຣະຣາຊາເຫລົ່ານັ້ນປົກຄອງຢູ່ ພຣະເຈົ້າເທິງຟ້າສວັນຈະຊົງຈັດ
ຕັ້ງຣາຊອານາຈັກອັນນຶ່ງຂຶ້ນ ຊຶ່ງຈະບໍ່ຖືກທຳລາຍແລະຈະຕັ້ງຢູ່ຕລອດໄປ ຣາຊອານາຈັກນີ້ຈະບໍ່ປຣາ
ໄຊແຕ່ຈະທຳລາຍຣາຊອານາຈັກອື່ນທັງປວງໃຫ້ໝົດສິ້ນ ທີ່ພຣະອົງທອດພຣະເນດເຫັນກ້ອນຫີນແຕກ
ອອກຈາກພູເອງໂດຍບໍ່ມີໃຜເຮັດ ກ້ອນຫີນນັ້ນໄດ້ກະທົບກັບຮູບເຫລັກ ຮູບທອງສຳລິດ ຮູບດິນ ແລະ
ຮູບເງິນແລະຄຳນັ້ນ ແມ່ນພຣະເຈົ້າອົງຍິ່ງໃຫຍ່ ໄດ້ຊົງບອກສິ່ງທີ່ຈະເກີດຂຶ້ນໃນອະນາຄົດໃຫ້ພຣະຣາ
ຊາຊົງຊາບ ຂ້າພຣະອົງໄດ້ທູນຖວາຍຄວາມຝັນແລະຄຳແກ້ແດ່ພຣະອົງຢ່າງຖືກຕ້ອງແລະເປັນຈິງ"

ເຫດການທີ່ຍິ່ງໃຫຍ່ໃນປະຫວັດສາດມວນມະນຸດນັ້ນກໍຄືການສະເດັດກັບມາຄັ້ງທີສອງຂອງພະເຍຊູ
ຄຣິດ ແລະການສ້າງອານາຈັກຂອງພະອົງເຊິ່ງແມ່ນຄວາມໝາຍຂອງ
"ຫີນແຕກຈາກພູເອງໂດຍບໍ່ມີໃຜເຮັດ"
ອານາຈັກຂອງພະອົງຈະຖືກສ້າງຂຶ້ນບໍ່ແມ່ນໂດຍນ້ຳມືຂອງມະນຸດແຕ່ໂດຍນ້ຳພະທັນອັນຊົງລິດຂອງພະ
ອົງ ອານາຈັກນີ້ຈະປົກຄຸມທົ່ວພື້ນພິພົບ. ນັ້ນກໍໝາຍຄວາມວ່າຄຳທຳນວາຍໄດ້ຮັບຄວາມສຳເລັດ

(ພະນິມິດ 11:15) “ຣາຊອານາຈັກແຫ່ງພິພົບນີ້ ໄດ້ກາຍເປັນກຳມະສິດແຫ່ງອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍ... ພຣະອົງຈະຊົງສເວີຍຣາດຕລອດໄປເປັນນິດ”

ເປັນທີ່ປະຫລາດໃຈຫລາຍທີ່ພະທຳດານິເອນໄດ້ພະຍາກອນເຖິງເຫດການສຸດທ້າຍ ນັ້ນຄືການສະເດັດກັບມາຄັ້ງທີສອງຂອງພະເຍຊູນັ້ນເອງ.
ນັ້ນແມ່ນໝາຍເຖິງຈຸດຈົບຂອງຊົນຊາດຕ່າງໆໃນທະວີບຢູໂຣບໄປມາເຖິງ
ພະເຈົ້າຈະສ້າງຕັ້ງອານາຈັກຂອງພະອົງຂຶ້ນ ອານາຈັກນີ້ຈະຕັ້ງຢູ່ຕໍ່ໄປເປັນນິດ.
ພະເຍຊູຈະເປັນກະສັດເໜືອກະສັດແລະພະເຈົ້າເໜືອພະເຈົ້າທັງປວງ
ພະອົງຈະລົງມາປົກຄອງອານາຈັກອັນຕະຫລອດໄປເປັນນິດຂອງພະອົງ.
ເມື່ອດານິເອນບອກສິ່ງທີ່ກະສັດເນບຸກາດເນສຊາຣ໌ຝັນແລະຄຳແກ້ຝັນຈາກພະເຈົ້າແລ້ວໆ ກະສັດເນບຸກາດເນສຊາຣ໌ກໍລຸກຂຶ້ນຈາກບັນລັງຂອງພະອົງແລ້ວກົ້ມກາບດານິເອນເພື່ອຖະຫວາຍກຽດແກ່ພະເຈົ້າອົງໃຫຍ່ຂອງດານິເອນ ຜູ້ຊົງສະຕິປັນຍາແລະພະລັງອຳນາດ

(ດານິເອນ 2:47) ພຣະອົງຊົງກ່າວວ່າ, “ພຣະເຈົ້າຂອງທ່ານຊົງເປັນພຣະເຈົ້າຂອງພຣະ ແລະຂອງພຣະຣາຊາທັງປວງ ແລະຊົງເປັນຜູ້ເຜີຍຄວາມເລິກລັບ”
ຂ້າພະເຈົ້າປາດຖະໜາຢາກໃຫ້ພະເຈົ້າຂອງດານິເອນ ຜູ້ຊົງເປັນພະຜູ້ສ້າງເປັນພະເຈົ້າຂອງຂ້າພະເຈົ້າ

600 ປີກ່ອນພະເຍຊູປະສູດ ພະເຈົ້າໄດ້ເປີດເຜີຍສິ່ງເລິກລັບທີ່ຈະເກີດຂຶ້ນໂດຍຜ່ານຄວາມຝັນຂອງກະສັດເນບຸກາດເນສເຊຣ໌. ອານາຈັກຕ່າງໆທີ່ມີທອງຄຳ, ເງິນ, ທອງສຳລິດ ແລະ ເຫລັກນັ້ນທັງໝົດໄດ້ລ່ວງພົ້ນກາຍເປັນ ປະຫວັດສາດແລ້ວ.
ສິ່ງທີ່ຈະເກີດຂຶ້ນຕໍ່ໄປແມ່ນເຫດການອັນເປັນສັນລະເສີນ
ນັ້ນຄືການສະເດັດກັບມາຂອງພະເຈົ້າຂອງເຮົາ.
ເພື່ອນທີ່ຮັກ “ຄວາມຝັນນັ້ນແນ່ນອນ ຄຳແກ້ຝັນນັ້ນແມ່ນໝັ້ນໃຈໄດ້”

ການເດີນທາງນັ້ນໃກ້ຈະມາເຖິງຈຸດທີ່ໝາຍແລ້ວ.
ເຫດການຍິ່ງໃຫຍ່ຕໍ່ໄປແມ່ນການສະເດັດກັບມາຂອງພະເຍຊູ ພະອົງຈະມາຈາກສະຫວັນມາຕັ້ງອານາຈັກອັນຕະຫລອດໄປເປັນນິດເທິງພື້ນພິພົບນີ້
ພະອົງໄດ້ມີແຜນອັນງົດງາມເພື່ອທຸກຄົນໂດຍຜ່ານໂລຫິດຂອງພະອົງທີ່ລັ່ງໄຫລເທິງໄມ້ກາງແຂນທີ່ຄາວາຣີ. ເຫລືອເວລາອີກບໍ່ດົນ ເຫດການເຫລົ່ານີ້ກໍຈະເກີດຂຶ້ນຕາມຄຳທຳນາຍ.
ໃນເວລານີ້ພະເຈົ້າພະເຈົ້າກຳລັງຈັດຕຽມອານາຈັກຂອງພະອົງແລະຈັດຫາຄົນທີ່ຈະມີສ່ວນໃນແຜ່ນດິນຂອງພະອົງ.

ພວກເຮົາແນ່ໃຈໄດ້ເລີຍວ່າພວກເຮົາຈະໄດ້ເຂົ້າໃນແຜ່ນດິນຂອງພະເຈົ້າຖ້າຫາກ ວ່າເຮົາຢາກຈະເຂົ້າໄປ ໃຫ້ເຮົາມີຄວາມເຊື່ອ ແລະເຮັດໃນສິ່ງທີ່ໂຈນຕອນທີ່ຖືກຕຶງຂ້າງໆພະເຍຊູເຮັດ. ໂຈນນັ້ນບໍ່ສາມາດເຂົ້າໃກ້ພະຍຊູ ແຕ່ວ່າໂຈນນັ້ນຮູ້ວ່າລາວເປັນຄົນບາບ ແລະລາວກໍຕ້ອງການຄວາມ ລອດພົ້ນຈາກບາບຕ່າງໆນາໆທີ່ລາວໄດ້ເຮັດ. ລາວມອງໄປທີ່ພະຜູ້ຊ່ອຍໃຫ້ລອດຂອງຄົນທັງຫລາຍ ແລະເຫັນໂລຫິດໄຫລອອກຜ່ານໜ້າຈາກພະສຽນຂອງພະອົງຍ້ອນໜາມແທງ ຫົວໃຈຂອງລາວຕື້ນຕັນ ຫລາຍ ລາວສາລະພາບບາບແລະລາວແລະເວົ້າອອກມາວ່າ

(ລູກາ 23:42) "ພຣະເຢຊູເອີຍ, ເມື່ອໃດທ່ານມາໃນແຜ່ນດິນຂອງທ່ານ ຂໍຈົ່ງລະນຶກເຖິງຂ້ານ້ອຍແດ່" ແລະພະເຍຊູກໍໃຫ້ຄວາມແນ່ໃຈແກ່ລາວວ່າລາວຈະຢູ່ກັບພະອົງໃນແຜ່ນດິນສະຫວັນ

ເຮົາທຸກຄົນກໍສາມາດໃຊ້ຄຳທີ່ໂຈນເວົ້າອອກມານັ້ນເປັນຄຳອະທິຖານ ແລະເຮົາກໍຈະໄດ້ຮັບຄວາມແນ່ໃຈ ວ່າເຮົາຈະຢູ່ກັບພະຄຣິດໃນແຜ່ນດິນຂອງພະອົງທີ່ຈະມາຕັ້ງເທິງໂລກໃນໄວໆນີ້ ແລະຫລັງຈາກນັ້ນເຮົາທຸກຄົນກໍຈະໄດ້ຍິນສຽງເອີ້ນຂອງພະເຍຊູເມື່ອພະອົງສະເດັດກັບມາ

(ມັດທາຍ 25:34) ""ພວກທ່ານທີ່ໄດ້ຮັບພຣະພອນຈາກພຣະບິດາຂອງເຮົາເອີຍ ຈົ່ງມາຮັບເອົາຣາຊອາ ນາຈັກ ຊຶ່ງໄດ້ຊົງຈັດຕຽມໄວ້ສຳລັບທ່ານຕັ້ງແຕ່ຕົ້ນເດີມໂລກ"

ໂລກນີ້ຢູ່ໃນຝີພະຫັດຂອງພະເຈົ້າບໍ່ແມ່ນຢູ່ໃນມືມະນຸດ.
ພວກເຮົາສາມາດຕໍ່ສູ້ອານາຄົດດ້ວຍຄວາມໝັ້ນໃຈ ພະເຍຊູຈະສະເດັດກັບມາໃນໄວໆນີ້
ຫີນທີ່ບໍ່ຮູ້ວ່າມາແຕ່ໃສນັ້ນຈະມາກະທົບຮູບນັ້ນ
ອານາຈັກແລະປະເທດຕ່າງໆໃນໂລກນີ້ຈະພັງທະລາຍລົງ
ພະເຈົ້າຕັ້ງອານາຈັກອັນຕະຫລອດເປັນນິດຂອງພະອົງໄວ້ເທິງໂລກນີ້
ພວກເຮົາທຸກຄົນສາມາດໝັ້ນໃຈໃນພະເຈົ້າໄດ້ ພວກເຮົາໄວ້ວາງໃຈໃນພະອົງໄດ້
ພວກເຮົາສາມາດມອບທຸກສິ່ງທຸກຢ່າງໃຫ້ພະອົງດູແລໄດ້ ພະອົງກຳລັງຮ້ອງຫາເຮົາທຸກຄົນ
ພະອົງກຳລັງຮຽກເຊີນເຮົາທຸກຄົນ ພະອົງກຳລັງເຄາະປະຕູໃຈຂອງເຮົາ
ເຮົາຈະຂານຕອບຮັບພະເຈົ້າບໍ່ວ່າ "ພະເຈົ້າ! ຂ້ານ້ອຍຈະເຊື່ອພະອົງດ້ວຍໝົດໃຈ ຂ້ານ້ອຍມອບຊີວິດ ໃຫ້ພະອົງນັບຕັ້ງແຕ່ບັດນີ້ໄປ" ໃນຂະນະທີ່ເຮົາອະທິຖານ?